ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ
--== ໙ ★★★★ ໙ ==--

ກະຊວງກະສິກຳ ແລະ ປ່າໄມ້
ພະແນກກະສິກຳ ແລະ ປ່າໄມ້ ນະຄອນຫລວງວຽງຈັນ

ເລກທີ 207 /ກປ.ນວ
ລົງວັນທີ 31 JAN 2011

# ຂໍ້ຕົກລົງ

## ພະແນກກະສິກຳ ແລະ ປ່າໄມ້ ນະຄອນຫຼວງວຽງຈັນ ວ່າດ້ວຍການເກັບຄ່າບໍລິການ ແລະ ຄ່າແບບຟອມເອກະສານ ຂອງວຽກງານກົນໄກການ ບໍລິການຜ່ານປະຕູດຽວຢູ່ພະແນກກະສິກຳ ແລະ ປ່າໄມ້ນະຄອນຫຼວງວຽງຈັນ

- ອີງໃສ່ກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນ ແຫ່ງ ສປປລາວ ສະບັບເລກທີ 03/ສພຊ ລົງວັນທີ 21 ຕຸລາ 2003. ໝວດທີ III ມາດຕາ 14 ວ່າດ້ວຍສິດ ແລະ ໜ້າທີ່ຂອງເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ.
- ອີງໃສ່ ຂໍ້ຕົກລົງຂອງ ນາຍົກລັດຖະມົນຕີ ວ່າດ້ວຍການຈັດຕັ້ງປະຕິບັດ ກົນໄກການບໍລິການ ຜ່ານປະຕູດຽວ ຢູ່ອົງການບໍລິຫານລັດ ສະບັບເລກທີ 86/ນຍ, ລົງວັນທີ 3 ເດືອນ 8 ປີ 2007

ເພື່ອເຮັດໃຫ້ການຈັດຕັ້ງປະຕິບັດ ໃນການຜັນຂະຫຍາຍວຽກງານ ບໍລິການຜ່ານປະຕູດຽວ ຢູ່ພະແນກກະສິກຳ ແລະ ປ່າໄມ້ນະຄອນຫຼວງວຽງຈັນ. ສອດຄ່ອງກັບສະພາບເສດຖະກິດສັງຄົມ. ໃນປະຈຸບັນ ແລະ ສອດຄ່ອງກັບກົດໝາຍ.

## ພະແນກກະສິກຳ ແລະ ປ່າໄມ້ນະຄອນຫລວງວຽງຈັນ, ຕົກລົງ:

<u>ມາດຕາ 1</u>: ວ່າດ້ວຍລາຍການເອກະສານ ແລະ ການປະກອບເອກະສານ.

1.1. <u>ລາຍການເອກະສານວຽກຂອງຂະແໜງແຜນການ ແລະ ການລົງທຶນ.</u>

1.1.1. ເອກະສານຂໍອະນຸຍາດດຳເນີນທຸລະກິດ ແລະ ຕໍ່ອະນຸຍາດດຳເນີນທຸລະກິດກະສິກຳ ແລະ ປ່າໄມ້1 ຊຸດປະກອບມີ

1./. ໃບຄຳຮ້ອງຂໍອະນຸຍາດດຳເນີນທຸລະກິດ 1 ໃບ

2./. ບົດສະເໜີໂຄງການ ຫຼື ບົດວິພາກເສດຖະກິດເຕັກນິກ ກະສິກຳແລະປ່າໄມ້ 1 ຊຸດ

3./. ໃບອະນຸຍາດລົງທຶນ ( ສຳເນົາ ) 1 ໃບ

4./. ໃບທະບຽນວິສາຫະກິດ ( ສຳເນົາ ) 1 ໃບ

5./. ໃບທະບຽນອາກອນ ( ສຳເນົາ ) 1 ໃບ

6./. ໃບຢັ້ງຢືນທີ່ຢູ່ ( ບໍ່ກາຍ 3 ເດືອນ ) 1 ໃບ

7./. ບັດປະຈຳຕົວ ( ສຳເນົາ ) 1 ໃບ

8./. ໃບຢັ້ງຢືນກຳມະສິດທີ່ດິນ ( ສຳເນົາ ) 1 ໃບ ຖ້າແມ່ນທຸລະກິດການປູກຝັງ

9./. ໃບຢັ້ງຢືນຖານະການເງິນ ( ບໍ່ກາຍ 1 ເດືອນ ) 1 ໃບ

10./ ຮູບ ( 3X4) 2 ໃບ

- ຖ້າແມ່ນຕໍ່ອະນຸຍາດດຳເນີນທຸລະກິດ ການປະກອບເອກະສານ ຄືກັບການສ້າງຕັ້ງໃໝ່ ແຕ່ໃຫ ເພີ່ມ ບົດບັນທຶກ ຂອງຄະນະກຳມະການກວດກາທີ່ໄດ້ໄປກວດກາຄືນການເຄື່ອນໄຫວຜ່ານມາ

1.1.2. ເອກະສານຂໍອະນຸຍາດດຳເນີນທຸລະກິດ ແລະ ຕໍ່ອະນຸຍາດດຳເນີນທຸລະກິດກະສິກຳ ແລະ ປ່າໄມ້ ປະເພດທີ່ບໍ່ໄດ້ອະນຸຍາດການລົງທຶນ 01ຊຸດການປະກອບເອກະສານ ຄ້າຍຄືກັບການຂໍອະນຸຍາດ ດຳເນີນທຸລະກິດ ກະສິກຳ ແລະ ປ່າໄມ້ແຕ່ບໍ່ມີໃບອະນຸຍາດລົງທຶນ,ຖ້າແມ່ນຂໍຕໍ່ອະນຸຍາດ ໃຫ້ເພີ່ມບົດບັນທຶກ ຂອງຄະນະກວດກາທີ່ໄດ້ໄປກວດກາຄືນ ການເຄື່ອນໄຫວຜ່ານມາ

1.1.3 ເອກະສານຂໍອະນຸຍາດຮັບຮອງບົດວິພາກເສດຖະກິດ - ເຕັກນິກຜະລິດກະສິກຳເປັນສິນຄ້າ ເພື່ອຂໍກູ້ຢືມທຶນມາ ດຳເນີນໂຄງການ 01 ຊຸດປະກອບມີ:

1./. ໃບຄຳຮ້ອງຂໍຮັບຮອງ ບົດວິພາກເສດຖະກິດ 1 ໃບ

2./. ບົດວິພາກເສດຖະກິດເຕັກນິກ ຫຼື ບົດສະເໜີໂຄງການ ຕ້ອງຢັ້ງຢືນຈາກນາຍບ້ານ ທີ່ກ່ຽວຂ້ອງ 1 ສະບັບ

3./. ບົດບັນທຶກຂອງຄະນະວິຊາການທີ່ລົງກວດກາ 1 ສະບັບ

1.1.4 ເອກະສານຂໍອະນຸຍາດ, ຕໍ່ອະນຸຍາດ ສ້າງຕັ້ງຟາມ 01 ຊຸດປະກອບມີ:

1./. ໃບຄຳຮ້ອງຂໍອະນຸຍາດສ້າງຕັ້ງຟາມ 1 ໃບ

2./. ໃບອະນຸຍາດການລົງທຶນ ( ສຳເນົາ ) 1 ໃບ

3./. ໃບທະບຽນວິສາຫະກິດ ( ສຳເນົາ ) 1 ໃບ

4./. ໃບທະບຽນອາກອນ ( ສຳເນົາ ) 1 ໃບ

5./. ໃບອະນຸຍາດດຳເນີນທຸລະກິດ ກະສິກຳ ແລະ ປ່າໄມ້ ( ສຳເນົາ ) 1 ໃບ

6./. ຮູບ ( 3X4) 2 ໃບ

1.2. <u>ລາຍການເອກະສານວຽກງານຂອງຂະແໜງປູກຝັງ</u>

1.21. ເອກະສານຂໍໃບຢັ້ງຢືນປອດສັດຕູພືດ. ( phytosanitary Cerfiticate ) ສິ່ງສິນຄ້າ ກະສິກຳ ແລະ ປ່າໄມ້ ອອກຕ່າງປະເທດ 01 ຊຸດປະກອບມີ:

1./. ໃບຄຳຮ້ອງຂໍໃບຢັ້ງຢືນປອດສັດຕູພືດ 1 ໃບ

2./. ໃບອະນຸຍາດການລົງທຶນ ( ສຳເນົາ ) 1 ໃບ

3./. ໃບທະບຽນວິສາຫະກິດ ( ສຳເນົາ ) 1 ໃບ

4./. ໃບທະບຽນອາກອນ ( ສຳເນົາ ) 1 ໃບ

5./. ໃບອະນຸຍາດດຳເນີນທຸລະກິດ ກະສິກຳ ແລະ ປ່າໄມ້ ( ສຳເນົາ ) 1 ໃບ

6./. ໃບລາຍການສິນຄ້າ( In voice and Packing list ) 1 ໃບ

### 1.2.2. ເອກະສານຂໍອະນຸຍາດນຳເຂົ້າຜະລິດຕະພັນກະສິກຳ ຝຸ່ນ, ຢາປ້ອງກັນພືດ, ເມັດພັນພືດ ແລະ ອຸປະກອນຮັບໃຊ້ການປູກຝັງ 01 ຊຸດ ປະກອບມີ:

1./. ໃບຄຳຮ້ອງ ຂໍອະນຸຍາດ ນຳສິນຄ້າກະສິກຳເຂົ້າ ( ຝຸ່ນ,ຢາປ້ອງກັນພືດ,ເມັດພັນ ພືດ ແລະ ອຸປະກອນຮັບໃຊ້ ການປູກຝັງ ) 1 ໃບ

2./. ໃບອະນຸຍາດການລົງທຶນ ( ສຳເນົາ ) 1 ໃບ

3./. ໃບທະບຽນວິສາຫະກິດ ( ສຳເນົາ ) 1 ໃບ

4./. ໃບທະບຽນອາກອນ ( ສຳເນົາ ) 1 ໃບ

5./. ໃບອະນຸຍາດດຳເນີນທຸລະກິດ ກະສິກຳ ແລະ ປ່າໄມ້ ( ສຳເນົາ ) 1 ໃບ

6./. ໃບຢັ້ງຢືນຈົດທະບຽນສິນຄ້າຈາກກົມປູກຝັງ ກະຊວງກະກຳ ແລະ ປ່າໄມ້ ( ປະເພດຢາ, ແນວພັນພືດ ແລະ ຝຸ່ນ ) 1 ໃບ

7./. ໃບລາຍການສິນຄ້າ (Invoice and Packing List ) 1 ໃບ

8./. ໃບຢັ້ງຢືນປອດສັດຕູພືດຈາກປະເທດຕົ້ນທາງ 1 ໃບ

9./. ໃບຢັ້ງຢືນແຫຼ່ງກຳເນີດພືດ ຈາກປະເທດຕົ້ນທາງ( ຖ້າເປັນແນວພັນພືດ ) 1 ໃບ

### 1.2.3. ເອກະສານຂໍອະນຸຍາດອອກ ແລະ ຕໍ່ໃບຢັ້ງຢືນຜະລິດ ແລະ ຈຳໜ່າຍຝຸ່ນ, ຢາປ້ອງກັນພືດ, ເມັດພັນພືດແລະ ອຸປະກອນຮັບໃຊ້ການປູກຝັງ 01 ຊຸດ ປະກອບມີ:

1./. ໃບຄຳຮ້ອງຂໍໃບແຈ້ງແຫຼ່ງກຳເນີດພືດ 1 ໃບ

2./. ໃບອະນຸຍາດການລົງທຶນ ( ສຳເນົາ ) 1 ໃບ

3./. ໃບທະບຽນວິສາຫະກິດ ( ສຳເນົາ ) 1 ໃບ

4./. ໃບທະບຽນອາກອນ ( ສຳເນົາ ) 1 ໃບ

5./. ໃບອະນຸຍາດດຳເນີນທຸລະກິດ ກະສິກຳ ແລະ ປ່າໄມ້ ( ສຳເນົາ ) 1 ໃບ

6./. ໃບລາຍການສິນຄ້າ (In voice and Packing list ) 1 ໃບ

### 1.2.4. ເອກະສານຂໍໃບແຈ້ງແຫຼ່ງກຳເນີດພືດ 01 ຊຸດ ປະກອບມີ:

1./. ໃບຄຳຮ້ອງ ຂໍອະນຸຍາດຜະລິດ ແລະ ຈຳໜ່າຍ (ຝຸ່ນ,ຢາປ້ອງກັນພືດ,ເມັດພັນ ພືດ ແລະ ອຸປະກອນຮັບໃຊ້ ການປູກຝັງ ) 1 ໃບ

2./. ໃບອະນຸຍາດການລົງທຶນ ( ສຳເນົາ ) 1 ໃບ

3./. ໃບທະບຽນວິສາຫະກິດ ( ສຳເນົາ ) 1 ໃບ

4./. ໃບທະບຽນອາກອນ ( ສຳເນົາ ) 1 ໃບ

5./. ໃບອະນຸຍາດດຳເນີນທຸລະກິດ ກະສິກຳ ແລະ ປ່າໄມ້ ( ສຳເນົາ ) 1 ໃບ

6./. ໃບລາຍການສິນຄ້າ (Invoice and Packing List ) ຖ້າແມ່ນອະນຸຍາດຈຳໜ່າຍ .

1.2.5. ເອກະສານຂໍໃບອະນຸຍາດສ້າງຕັ້ງສວນປູກພືດ ແລະ ສວນໄມ້ດອກໄມ້ປະດັບ 01 ຊຸດ ປະກອບມີ:

1./. ໃບຄຳຮ້ອງຂໍອະນຸຍາດສ້າງຕັ້ງສວນປູກພືດປູກພືດ ) 1 ໃບ

2./. ໃບຢັ້ງຢືນທີ່ຢູ່ ( ບໍ່ກາຍ 3 ເດືອນ ) 1 ໃບ

3./. ໃບທະບຽນວິສາຫະກິດ ( ສຳເນົາ ) 1 ໃບ

4./. ໃບທະບຽນອາກອນ ( ສຳເນົາ ) 1 ໃບ

5./. ໃບທະບຽນທີ່ດິນ ( ໃບມອບກຳມະສິດ ຫຼື ສັນຍາເຊົ່າ ) ( ສຳເນົາ ) 1 ໃບ

6./. ໃບເສຍພາສີທີ່ດິນປະຈຳປີ ( ສຳເນົາ ) 1 ໃບ

7./. ບົດລາຍງານກ່ຽວກັບການປູກພືດ ( ຢັ້ງຢືນຈາກນາຍບ້ານ ບ່ອນດິນຕັ້ງຢູ່ ) 1 ໃບ

8./. ຮູບ ( 3X4) 2 ໃບ

1.2.6. ເອກະສານຂໍອະນຸຍາດ ທັບປ່ຽນດິນປູກຝັງ 01 ຊຸດ ປະກອບມີ:

1./. ໃບຄຳຮ້ອງຂໍອະນຸຍາດ ທັບປ່ຽນດິນປູກຝັງ 1 ໃບ

2./. ໃບຢັ້ງຢືນທີ່ຢູ່ ( ບໍ່ກາຍ 3 ເດືອນ ) 1 ໃບ

3./. ໃບຕາດິນ ( ສຳເນົາ ) 1 ໃບ

4./. ໃບມອບສິດແລ່ນ ຂໍແລ່ນອະນຸຍາດ ( ຖ້າບໍ່ແມ່ນເຈົ້າຂອງ ) 1 ໃບ

5./. ໃບແຜນຜັງທີ່ຕັ້ງ ແລະ ຮູບຖ່າຍດິນທີ່ຈະປ່ຽນ 1 ໃບ

6./. ສັນຍາພູກພັນກັບເຈົ້າຂອງດິນຂ້າງຄຽງ 1 ໃບ

7./. ໃບເສຍພາສີທີ່ດິນປະຈຳປີ ( ສຳເນົາ ) 1 ໃບ

1.3. <u>ລາຍການເອກະສານວຽກງານ ຂອງຂະແໜງ ລ້ຽງສັດ ແລະ ການປະມົງ:</u>

1.31. ເອກະສານ ຂໍອະນຸຍາດນຳເຂົ້າ ອາຫານສັດ, ສ່ວນປະສົມອາຫານສັດ, ອຸປະກອນການລ້ຽງສັດ, ຢາປິ່ນປົວ ແລະ ປ້ອງກັນສັດ 01 ຊຸດ ປະກອບມີ:

1./. ໃບຄຳຮ້ອງຂໍອະນຸຍາດນຳເຂົ້າ: ອາຫານສັດ, ສ່ວນປະສົມອາຫານສັດ , ອຸປະກອນການລ້ຽງສັດ, ຢາປິ່ນປົວ ແລະ ປ້ອງກັນສັດ 1 ໃບ

2./. ໃບອະນຸຍາດການລົງທຶນ ພາຍໃນ ຫຼື ຕ່າງປະເທດ ( ສຳເນົາ ) 1 ໃບ

3./. ໃບທະບຽນວິສາຫະກິດ ( ສຳເນົາ ) 1 ໃບ

4./. ໃບທະບຽນອາກອນ ( ສຳເນົາ ) 1 ໃບ

5./. ໃບອະນຸຍາດດຳເນີນທຸລະກິດ ກະສິກຳ ແລະ ປ່າໄມ້ ( ສຳເນົາ ) 1 ໃບ

6./. ໃບລາຍການສິນຄ້າ (In voice and Packing list ) 1 ໃບ

1.3.2. ເອກະສານອະນຸຍາດນຳເຂົ້າ, ສົ່ງອອກ, ສັດ, ແນວພັນສັດ ແລະ ຜະລິດຕະພັນສັດ01 ຊຸດປະກອບມີ:

1./. ໃບຄຳຮ້ອງຂໍອະນຸຍາດນຳເຂົ້າສົ່ງອອກ, ສັດ, ແນວພັນສັດ ແລະ ຜະລິດຕະພັນສັດ 1 ໃບ

2./. ໃບອະນຸຍາດການລົງທຶນ ພາຍໃນ ຫຼື ຕ່າງປະເທດ ( ສຳເນົາ ) 1 ໃບ

3./. ໃບທະບຽນວິສາຫະກິດ (ສຳເນົາ) 1 ໃບ
4./. ໃບທະບຽນອາກອນ (ສຳເນົາ) 1 ໃບ
5./. ໃບອະນຸຍາດດຳເນີນທຸລະກິດ ກະສິກຳ ແລະ ປ່າໄມ້ (ສຳເນົາ) 1 ໃບ
6./. ໃບລາຍການສິນຄ້າ (Invoice and Packing list)
ຖ້າແມ່ນປະເພດສັດລ້ຽງ 1 ໃບ
7. ໃບຢັ້ງຢືນ ການດຳເນີນທຸລະກິດ ການລ້ຽງສັດ ຟາມຕົ້ນທາງ 1 ໃບ
8. ໃບຢັ້ງຢືນ ການສັກຢາປ້ອງກັນ ພະຍາດສັດແຕ່ລະສະນິດ 1 ໃບ
9. ໃບຢັ້ງຢືນ ປອດພະຍາດສັດ ຈາກອົງການສະຕະວະແພດ ປະເທດຕົ້ນທາງ 1 ໃບ
10. ໃບອະນຸຍາດສົ່ງອອກຈາກ ອົງການຄຸ້ມຄອງ ສັດລ້ຽງປະເທດຕົ້ນທາງ
( ເປັນພາສາອັງກິດ ຫຼື ພາສາຝລັ່ງ ) 1 ໃບ
11. ໃບຢັ້ງຢືນແຫຼ່ງກຳເນີດຂອງສັດ ( Pedegree ) ຈາກປະເທດຕົ້ນທາງ ( ສຳລັບ ພໍ່ ແມ່ພັນ ) 1 ໃບ
12. ໃບຢັ້ງຢືນ ເຂົ້າເປັນສະມາຊິກກຸ່ມລ້ຽງສັດ, ປາ, ໄກ່ ( ຖ້າມີ ) 1 ໃບ
13. ໃບຢັ້ງຢືນ ປອດພະຍາດ ຈາກກົມລ້ຽງສັດ ແລະ ການປະມົງ
( Veterinary Health Certificate ) 1 ໃບ

### 1.3.3. ເອກະສານຂໍອະນຸຍາດ ເຄື່ອນຍ້າຍສັດ, ຜະລິດຕະພັນສັດ ໄປຕ່າງແຂວງ 01 ຊຸດ ປະກອບມີ:

1./. ໃບຄຳຮ້ອງຂໍອະນຸຍາດ ເຄື່ອນຍ້າຍສັດ, ຜະລິດຕະພັນສັດ 1 ໃບ
2./. ໃບຢັ້ງຢືນກວດກາສຸຂະພາບສັດຈາກສັດຕະວະແພດເມືອງ ຫຼື ຂະແໜງລ້ຽງສັດ ການປະມົງ 1 ໃບ
3./. ໃບຢັ້ງຢືນການສັກຢາ ປ້ອງກັນພະຍາດຈາກຟາມ 1 ໃບ
4./. ໃບຢັ້ງຢືນການກວດກາຜະລິດຕະພັນສັດຈາກສັດຕະວະແພດ ຫຼື ຂະແໜງລ້ຽງສັດ ແລະ ການປະມົງ
( ສຳລັບຜະລິດຕະພັນສັດ ) 1 ໃບ

### 1.3.4. ເອກະສານຂໍອະນຸຍາດ ຢັ້ງຢືນສຸຂະພາບສັດ 01 ຊຸດ ປະກອບມີ:

1./. ໃບຄຳຮ້ອງ ຂໍໃບຢັ້ງຢືນ ສຸຂະພາບສັດ 1 ໃບ
2./. ໃບຢັ້ງຢືນ ສຸຂະພາບສັດ ໂດຍແມ່ນວິຊາການຟາມອອກໃຫ້ 1 ໃບ
3./. ໃບຢັ້ງຢືນການສັກຢາສັດ ແລະ ສັກຢາປ້ອງກັນ 1 ໃບ
4./. ໃບທະບຽນວິສາຫະກິດ (ສຳເນົາ) 1 ໃບ
5./. ໃບທະບຽນອາກອນ (ສຳເນົາ) 1 ໃບ
6./. ໃບອະນຸຍາດການລົງທຶນ (ສຳເນົາ) 1 ໃບ
7./. ໃບອະນຸຍາດ ດຳເນີນທຸລະກິດ ກະສິກຳ ແລະ ປ່າໄມ້ (ສຳເນົາ) 1 ໃບ

## 1.4. <u>ລາຍການເອກະສານວຽກງານຂອງຂະແໜງປ່າໄມ້</u>

### 1.4.1. ເອກະສານຂໍອະນຸຍາດສົ່ງອອກ, ເຄື່ອນຍ້າຍຜ່ານໄມ້ທ່ອນ, ໄມ້ແປຮູບ ແລະ ຜະລິດຕະພັນໄມ້ 01 ຊຸດ ປະກອບມີ:

1./. ໃບຄຳຮ້ອງຂໍອະນຸຍາດສົ່ງອອກ, ເຄື່ອນຍ້າຍ, ຜ່ານໄມ້ທ່ອນ,ໄມ້ແປຮູບແລະຜະລິດຕະພັນໄມ້. 1 ໃບ
2./. ໃບທະບຽນດຳເນີນທຸລະກິດໄມ້ (ສຳເນົາ) 1 ໃບ

3./. ໃບຕິດຕາມນຳສິ່ງສິນຄ້າ ຈາກພະແນກອຸດສະຫະກຳ ແລະ ການຄ້າ 1 ໃບ

4./. ໃບສັນຍາຊື້ຂາຍກັບບໍລິສັດ ທີ່ຮັບຊື້ປາຍທາງ 1 ໃບ

5./. ໃບຢັ້ງຢືນທີ່ມາຂອງໄມ້ພ້ອມທັງການສຳລະຜ່ານທະນາຄານ 1 ໃບ

6./. ໃບລາຍການໄມ້ຂາຍທີ່ບໍລິສັດ ໄດ້ຈັດສົ່ງລົດບັນທຶກແຕ່ລະຄັນ( PacKing List ) ແລະ ໃບແຈ້ງລາຄາໄມ້ທີ່ສົ່ງອອກ ( Invoice ) 1 ຊຸດ

7./. ຖ້າເປັນໄມ້ແປຮູບ ຫຼື ໄມ້ທ່ອນຈາກປ່າທຳມະຊາດ ຕ້ອງມີໂກຕ່າ ສົ່ງອອກຈາກລັດຖະບານ ( ໃນກໍລະນີພິເສດ ) 1 ຊຸດ

### 1.4.2. ເອກະສານຂໍອະນຸຍາດຂຸດຄົ້ນ ແລະ ເຄື່ອນຍ້າຍ ເຄື່ອງປ່າຂອງດົງ 01 ຊຸດ ປະກອບມີ:

1./. ໃບຄຳຮ້ອງຂໍອະນຸຍາດຂຸດຄົ້ນ ແລະ ເຄື່ອນຍ້າຍ ເຄື່ອງປ່າຂອງດົງ 1 ຊຸດ

2./. ບົດບັນທຶກກວດກາ ຂອງພະນັກງານປ່າໄມ້, ໂດຍຢັ້ງຢືນຈາກນາຍບ້ານ ແລະ ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ. ( ໂດຍອີງຕາມໂກຕ່າປະສົກປີ ) 1 ໃບ

3./. ໃບທະບຽນວິສາຫະກິດ, ຖ້າແມ່ນໂຮງງານ ຫຼື ບໍລິສັດ ( ສຳເນົາ ) 1 ໃບ

### 1.4.3. ເອກະສານຂໍອະນຸຍາດຂຶ້ນທະບຽນ, ຕໍ່ທະບຽນຈັກຕັດໄມ້ 01 ຊຸດ ປະກອບມີ:

1./. ໃບຄຳຮ້ອງຂໍອະນຸຍາດຂຶ້ນທະບຽນ ຫຼື ຕໍ່ທະບຽນຈັກຕັດໄມ້ 1 ໃບ

2./. ໃບຢັ້ງຢືນທີ່ຢູ່ຂອງຜູ້ກ່ຽວ 1 ໃບ

3./. ໃບບິນຊື້ຈັກຕັດໄມ້ ( ບິນອາກອນອອກໃຫ້ ), ໃຫ້ຂຽນບອກລະອຽດ ເລກຈັກ, ຍີ່ຫໍ້ ແລະ ສີ 1 ໃບ

4./. ບົດບັນທຶກກວດກາ ຂອງພະນັກງານກວດກາປ່າໄມ້ເມືອງ ໂດຍຢັ້ງຢືນຈາກຫ້ອງການກະສິກຳ ແລະ ປ່າໄມ້ເມືອງ 1 ສະບັບ

5./. ຮູບ ( 3x4 ) 2 ໃບ

### 1.4.4. ເອກະສານຂໍອະນຸຍາດຕັດໄມ້ ຈາກບ່ອນຈຳເປັນ, ບ່ອນກິດຂວາງ ແລະ ບ່ອນບຸກເບີກເນື້ອທີ່. 01 ຊຸດ ປະກອບມີ:

1./. ໃບຄຳຮ້ອງຂໍອະນຸຍາດຕັດໄມ້ 1 ໃບ

2./. ໃບຢັ້ງຢືນທີ່ຢູ່ ( ບໍ່ກາຍ 3 ເດືອນ ) 1 ໃບ

3./ ໃບຢັ້ງຢືນກຳມະສິດ ຄອບຄອງທີ່ດິນ 1 ໃບ

4./. ໃບຕິດຕາມເສຍພາສີທີ່ດິນ 1 ໃບ

5./. ໃບຢັ້ງຢືນກຳມະສິດໄມ້ ຈາກນາຍບ້ານກ່ຽວຂ້ອງ 1 ໃບ

6./. ບົດບັນທຶກກວດກາ ຂອງພະນັກງານປ່າໄມ້ເມືອງ ພ້ອມທັງຢັ້ງຢືນຈາກ ກະສິກຳ ແລະ ປ່າໄມ້ເມືອງ 1 ໃບ

### 1.4.5. ເອກະສານຂໍອະນຸຍາດຕັດໄມ້ປູກ 01 ຊຸດ ປະກອບມີ:

1./. ໃບຄຳຮ້ອງຂໍອະນຸຍາດຕັດໄມ້ປູກ 1 ໃບ

2./. ໃບຢັ້ງຢືນສວນປູກໄມ້ 1 ໃບ

3./. ບົດບັນທຶກກວດກາຂອງ ພະນັກງານປ່າໄມ້ເມືອງ ແລະ ຢັ້ງຢືນຈາກຫ້ອງການກະສິກຳ ແລະ ປ່າໄມ້ເມືອງ, ນາຍບ້ານ 1 ໃບ

4./. ບັນຊີໄມ້ຢືນຕົ້ນ

1.4.6. ເອກະສານຂໍຂຶ້ນທະບຽນ ສວນກ້າເບ້ຍໄມ້ ແລະ ສວນປູກໄມ້ 1 ໃບ

1./. ໃບຄໍາຮ້ອງຂໍຂຶ້ນທະບຽນ ສວນກ້າເບ້ຍໄມ້ ແລະ ສວນປູກໄມ້ 01 ຊຸດ ປະກອບມີ:

2./. ໃບຢັ້ງຢືນທີ່ຢູ່ຜູ້ກ່ຽວ ( ບໍ່ກາຍ 3 ເດືອນ ) 1 ໃບ

3./. ໃບຢັ້ງຢືນກໍາມະສິດ ຄອບຄອງທີ່ດິນ 1 ໃບ

4./. ໃບຕິດຕາມການເສຍພາສີດິນ ( ສໍາເນົາ ) 1 ໃບ

5./. ບົດບັນທຶກກວດກາຂອງ ພະນັກງານປ່າໄມ້ເມືອງ ພ້ອມທັງຢັ້ງຢືນຈາກ ຫ້ອງການ ກະສິກໍາ ແລະ ປ່າໄມ້ເມືອງ ( ສໍາເນົາ ) 1 ໃບ

1.5. ລາຍການເອກະສານວຽກ ຂອງຂະແໜງ ຊົນລະປະທານ. 1 ໃບ

1.5.1. ເອກະສານຢັ້ງຢືນ ຄຸນນະພາບ ການກໍ່ສ້າງຊົນລະປະທານ

1./. ໃບຄໍາຮ້ອງຂໍຢັ້ງຢືນ ຄຸນນະພາບການກໍ່ສ້າງ ຊ ປ ທ ຈາກບໍລິສັດ 01 ຊຸດ ປະກອບມີ:

2./. ແບບກໍ່ສ້າງ 1 ໃບ

3./. ສັນຍາກໍ່ສ້າງ ພ້ອມດ້ວຍໃບສະເໜີລາຄາ 1 ຊຸດ

4./. ໃບຢັ້ງຢືນການນໍາໃຊ້ ວັດສະດຸກໍ່ສ້າງ ( ປະເພດຫີນ, ຊາຍ, ເຫຼັກ, ຊີມັງ ) 1 ຊຸດ

1.5.2. ເອກະສານຂໍຢັ້ງຢືນຜ່ານແບບກໍ່ສ້າງ ຊົນລປະທານ 01 ຊຸດ ປະກອບມີ: 1 ໃບ

1./. ໃບຄໍາຮ້ອງຂໍສະເໜີຜ່ານແບບກໍ່ສ້າງ

2./. ບົດວິພາກເສດຖະກິດສັງຄົມ 1 ໃບ

3./. ບົດຄິດໄລ່ອອກແບບກໍ່ສ້າງ 1 ສະບັບ

4./. ບົດຄິດໄລ່ທາງທໍລະນີສາດ 1 ສະບັບ

5./. ແຜນແຕ້ມການກໍ່ສ້າງ 1 ສະບັບ

6./. ບົດຄິດໄລ່ມູນຄ່າກໍ່ສ້າງ 1 ຊຸດ

1.5.3. ເອກະສານຂໍຢັ້ງຢືນສຶກສາ ແຜນສັງລວມ 01 ຊຸດ ປະກອບມີ: 1 ສະບັບ

1./. ໃບຄໍາຮ້ອງຂໍສະເໜີ ຂໍຢັ້ງຢືນການສຶກສາ ແຜນສັງລວມ

2./. ບົດສຶກສາທາງດ້ານເຕັກນິກ ເບື້ອງຕົ້ນ 1 ໃບ

3./. ບົດວິພາກເສດຖະກິດ-ສັງຄົມ 1 ສະບັບ

4./. ບົດສຶກສາຜົນກະທົບ ຈາກສິ່ງແວດລ້ອມຕໍ່ສັງຄົມ 1 ສະບັບ

<u>ມາດຕາ 2</u> : ວ່າດ້ວຍຄ່າແບບຟອມ, ແບບພິມ ແລະ ບໍລິການຕ່າງໆ. 1 ສະບັບ

- ຄ່າແບບຟອມ ( ເອກະສານຄໍາຮ້ອງຕ່າງໆ )
- ຄ່າແບບພິມ ( ໃບອະນຸຍາດຕ່າງໆ )
- ຄ່າບໍລິການ ( ພິວພັນເອກະສານ, ລົງກວດກາສະຖານທີ່ຕ່າງໆ )

2.1. ວຽກງານຂະແໜງແຜນການ ແລະ ການລົງທຶນ.

1./. ຄໍາຮ້ອງຂໍອະນຸຍາດດໍາເນີນທຸລະກິດ

2./. ຄ່າແບບພິມ ( ແຂງ ) 10.000 ກີບ/ຊຸດ

3./. ຄ່າບໍລິການ ລົງກວດກາສະຖານທີ່ ແລະ ພິວພັນເອກະສານຕ່າງໆ 20.000ກີບ/ຄັ້ງ

50.000 ກີບ/ຄັ້ງ

4./. ຄ່າທຳນຽມ ( ຕາມລັດຖະບັນຍັດ ເລກທີ 03/ປປທ )

## 2.2. ວຽກງານຂະແໜງປູກຝັງ.

### 2.2.1. ເອກະສານຂໍໃບຢັ້ງຢືນ ປອດສັດຕູພືດ ເພື່ອສົ່ງອອກສິນຄ້າ ກະສິກຳ ແລະ ປ່າໄມ້

1./. ໃບຄຳຮ້ອງຂໍຢັ້ງຢືນ ປອດສັດຕູພືດ 10.000 ກີບ/ຊຸດ

2./. ເອກະສານຢັ້ງຢືນປອດສັດຕູພືດ, ຄ່າບໍລິການ ກວດກາ ແລະ ວິໃຈ( ຕາມລັດຖະບັນຍັດເລກທີ 03/ປປທ ) .

### 2.2.2. ເອກະສານຂໍອະນຸຍາດນຳເຂົ້າ, ສົ່ງອອກຝຸ່ນ, ຢາປ້ອງກັນພືດ, ເມັດພັນພືດ ແລະ ອຸປະກອນຮັບໃຊ້ການປູກຝັງ.

1./. ໃບຄຳຮ້ອງ 10.000ກີບ/ຊຸດ

2./. ຄ່າບໍລິການ ( ຕາມລັດຖະບັນຍັດເລກທີ 03/ປປທ )

3./. ຄ່າສັງລວມຂໍ້ມູນເພື່ອອອກ ແລະ ຕໍ່ທະບຽນ ( ຕາມລັດຖະບັນຍັດເລກທີ 03/ປປທ )

### 2.2.3. ເອກະສານຂໍອະນຸຍາດຜະລິດ ແລະ ຈຳໜ່າຍຝຸ່ນ, ຢາປ້ອງກັນພືດ, ເມັດພັນພືດ ແລະ ອຸປະກອນຮັບໃຊ້ການປູກຝັງ

1./. ໃບຄຳຮ້ອງຂໍໃບອະນຸຍາດ 10.000ກີບ/ຊຸດ

2./. ຄ່າແບບພິມ ( ໃບອະນຸຍາດ ) 15.000 ກີບ/ຄັ້ງ

3./. ຄ່າບໍລິການ ( ຕາມລັດຖະບັນຍັດເລກທີ 03/ປປທ )

4./. ຄ່າສັງລວມຂໍ້ມູນເພື່ອ ອອກ ແລະ ຕໍ່ທະບຽນ ( ຕາມລັດຖະບັນຍັດເລກທີ 03/ປປທ )

### 2.2.4. ເອກະສານຂໍໃບແຈ້ງແຫຼ່ງກຳເນີດພືດ

1./. ໃບຄຳຮ້ອງຂໍໃບແຈ້ງແຫຼ່ງກຳເນີດພືດ 10.000ກີບ/ຊຸດ

2./. ຄ່າບໍລິການ ( ຕາມລັດຖະບັນຍັດເລກທີ 03/ປປທ )

3./. ຄ່າແບບພິມໃບຢັ້ງຢືນ 15.000 ກີບ/ຄັ້ງ

### 2.2.5. ເອກະສານຂໍອະນຸຍາດ ສ້າງຕັ້ງສວນປູກພືດ ແລະ ສວນໄມ້ດອກ ໄມ້ປະດັບ.

1./. ໃບຄຳຮ້ອງຂໍອະນຸຍາດສ້າງຕັ້ງ 10.000ກີບ/ຊຸດ

2./. ແບບພິມ ( ແຂວງ ) 20.000 ກີບ/ຄັ້ງ

3./. ຄ່າບໍລິການວິໃຈ ແລະ ລວບລວມຂໍ້ມູນອອກໃບຢັ້ງຢືນ ( ຕາມລັດຖະບັນຍັດເລກທີ 03/ປປທ )

4./. ຄ່າທຳນຽບອອກໃບອະນຸຍາດ ( ຕາມລັດຖະບັນຍັດ 03/ປປທ )

### 2.2.6. ເອກະສານຂໍອະນຸຍາດທັນປຽນດິນປູກຝັງ.

1./. ໃບຄຳຮ້ອງຂໍອະນຸຍາດ ທັນປ່ຽນດິນປູກຝັງ 10.000 ກີບ/ຊຸດ

2./. ຄ່າແບບພິມ ( ໃບອະນຸຍາດ ) 15.000 ກີບ/ຄັ້ງ

3./. ຄ່າບໍລິການ ສັງລວມຂໍ້ມູນ ເພື່ອອອກອະນຸຍາດ 100.000ກີບ/ຄັ້ງ

## 2.3. ວຽກງານຂອງຂະແໜງລ້ຽງສັດ ແລະ ການປະມົງ

**2.3.1. ເອກະສານຂໍອະນຸຍາດ ອອກ ແລະ ຕໍ່ໃບຢັ້ງຢືນ ນຳເຂົ້າ, ສົ່ງອອກສັດ,ແນວພັນສັດ, ຜະລິດຕະ ພັນສັດ, ອາຫານສັດ,ສ່ວນປະສົມອາຫານສັດ, ອຸປະກອນການລ້ຽງສັດ, ຢາປິ່ນປົວແລະປ້ອງກັນສັດ.**

1./. ຄຳຮ້ອງຂໍອະນຸຍາດ — 10.000ກີບ/ຊຸດ

2./. ແບບພິມ ( ໃບຢັ້ງຢືນ ) — 15.000ກີບ/ຄັ້ງ

3./. ຄ່າບໍລິການ ເອກະສານ — 50.000ກີບ/ຄັ້ງ

**2.3.2. ເອກະສານຂໍໃບຢັ້ງຢືນ ການເຄື່ອນຍ້າຍສັດ, ຜະລິດຕະພັນສັດ**

1./. ໃບຄຳຮ້ອງ ຂໍໃບຢັ້ງຢືນ ການເຄື່ອນຍ້າຍ — 10.000ກີບ/ຊຸດ

2./. ແບບພິມ ( ໃບອະນຸຍາດ ) — 15.000 ກີບ/ຄັ້ງ

3./. ຄ່າບໍລິການ ( ເຄື່ອນຍ້າຍ ) . ( ຕາມລັດຖະບັນຍັດເລກທີ03/ປປທ )

**2.3.3. ເອກະສານຂໍອະນຸຍາດໃບຢັ້ງຢືນສຸຂະພາບສັດ.**

1./. ໃບຄຳຮ້ອງ — 10.000ກີບ/ຊຸດ

2./. ແບບຟອມ ( ໃບຢັ້ງຢືນ ) — 15.000/ຄັ້ງ

3./. ຄ່າບໍລິການ ( ອອກໃບຢັ້ງຢືນ ) ( ຕາມລັດຖະບັນຍັດເລກທີ03/ປປທ )

**2.4. ວຽກງານຂອງຂະແໜງປ່າໄມ້.**

2.4.1 ເອກະສານຂໍອະນຸຍາດສົ່ງອອກ, ເຄື່ອນຍ້າຍໄມ້ແປຮູບ, ໄມ້ທ່ອນ ແລະ ຜະລິດຕະພັນໄມ້.

1./. ໃບຄຳຮ້ອງຂໍອະນຸຍາດສົ່ງອອກ ( ໄມ້ທ່ອນ, ໄມ້ແປຮູບ ແລະ ຜະລິດຕະພັນໄມ້ )

2./. ຄ່າທຳນຽມໃບອະນຸຍາດເຄື່ອນຍ້າຍພາຍໃນ ( ຕາມລັດຖະບັນຍັດເລກທີ03/ປປທ )

3./. ຄ່າທຳນຽມໃບອະນຸຍາດຜ່ານ ລະຫ່ວາງປະເທດ ( ຕາມລັດຖະບັນຍັດເລກທີ03/ປປທ ) 03,
100.000ກີບ/ຄັ້ງ

2.4.2. ເອກະສານຂໍອະນຸຍາດຂຸດຄົ້ນ ແລະ ເຄື່ອນຍ້າຍເຄື່ອງປ່າຂອງດົງ.

1./. ໃບຄຳຮ້ອງຂໍອະນຸຍາດ — 10.000ກີບ/ຊຸດ

2./. ຄ່າແບບພິມ ( ໃບອະນຸຍາດ ) — 15.000ກີບ/ຄັ້ງ

3./. ຄ່າທຳນຽມອອກອະນຸຍາດ ( ຕາມລັດຖະບັນຍັດເລກທີ03/ປປທ )

4./. ຄ່າບໍລິການຄົ້ນຄົ້ວ, ສັງລວມຂໍ້ມູນ — 50.000ກີບ/ຊຸດ

**2.4.3. ເອກະສານຂໍອະນຸຍາດຂຶ້ນທະບຽນ, ຕໍ່ທະບຽນຈັກຕັດໄມ້.**

1./. ຄຳຮ້ອງຂໍອະນຸຍາດຂຶ້ນ ແລະ ຕໍ່ທະບຽນ — 10.000ກີບ/ຊຸດ

2./. ຄ່າແບບພິມ ( ແຂງ ) — 20.000ກີບ/ຄັ້ງ

3./. ຄ່າທຳນຽມອອກອະນຸຍາດ ໃບທະບຽນ — 15.000ກີບ/ຄັ້ງ

4./. ຄ່າບໍລິການເອກະສານ

**2.4.4. ເອກະສານຂໍອະນຸຍາດຕັດໄມ້ຈາກບ່ອນຈຳເປັນ, ບ່ອນກິດຂວາງ, ບ່ອນບຸກເບີກ ເນື້ອທີ່ ແລະ ໄມ້ປູກ.**

1./. ຄຳຮ້ອງຂໍອະນຸຍາດຕັດໄມ້ — 10.000ກີບ/ຊຸດ

2./. ຄ່າແບບພິມ ( ໃບອະນຸຍາດ ) — 10.000ກີບ/ຄັ້ງ

2.4.5. ເອກສານຂໍຂຶ້ນທະບຽນ ສວນກ້າເບ້ຍໄມ້ ແລະ ສວນປູກໄມ້

1./. ຄໍາຮ້ອງຂໍຂຶ້ນທະບຽນ 10.000 ກີບ/ຊຸດ

2./. ແບບພິມ ( ແຂງ ) 20.000ກີບ/ຄັ້ງ

3./. ຄ່າທໍານຽມ ອອກອະນຸຍາດ 50.000ກີບ/ຄັ້ງ

2.5. ວຽກງານຂອງຂະແໜງຊົນລະປະທານ.

1./. ໃບຄໍາຮ້ອງ ຫຼື ໃບສະເໜີ 10.000ກີບ/ຊຸດ

2./. ແບບພິມ ( ໃບຢັ້ງຢືນ ) 15.000ກີບ/ຄັ້ງ

3./. ຢັ້ງຢືນຄຸນນະພາບການກໍ່ສ້າງຊົນລະປະທານ ( ຕາມລັດຖະບັນຍັດເລກທີ03/ປປທ )

4./. ຢັ້ງຢືນຜ່ານແບບກໍ່ສ້າງຊົນລະປະທານ ( ຕາມລັດຖະບັນຍັດເລກທີ03/ປປທ )

5./. ຢັ້ງຢືນສຶກສາແຜນສັງລວມ ( ຕາມລັດຖະບັນຍັດເລກທີ03/ປປທ )

ມາດຕາ 3: ວ່າດ້ວຍການກໍານົດເວລາ ແກ້ໃຂເອກະສານ.

3.1. ເອກະສານວຽກງານຂະແໜງແຜນການ ແລະ ການລົງທຶນ

3.1.1. ເອກະສານຂໍອະນຸຍາດ ແລະ ຕໍ່ອະນຸຍາດ ດໍາເນີນທຸລະກິດ ກະສິກໍາ ແລະ ປ່າໄມ້ 10 ວັນ

3.1.2. ເອກະສານຂໍອະນຸຍາດ ແລະ ຕໍ່ອະນຸຍາດ ດໍາເນີນທຸລະກິດ ຂອງກະສິກໍາ ແລະ ປ່າໄມ້ ບໍ່ໄດ້ອະນຸຍາດລົງທຶນ 10 ວັນ

3.1.3. ເອກະສານຂໍອະນຸຍາດ ຮັບຮອງບົດວິພາກ ເສດຖະກິດ- ເຕັກນິກຜະລິດກະສິກໍາ ເປັນສິນຄ້າ ເພື່ອກູ້ຢືມເງິນມາດໍາເນີນໂຄງການ 10 ວັນ

3.2. ເອກະສານວຽກງານຂອງຂະແໜງປູກຝັງ.

3.2.1. ເອກະສານຂໍໃບຢັ້ງຢືນ ປອດສັດຕູພືດ ສິ່ງສິນຄ້າກະສິກໍາ ອອກຕ່າງປະເທດ 4 ວັນ

3.2.2. ເອກະສານຂໍອະນຸຍາດນໍາເຂົ້າ ຜະລິດຕະພັນກະສິກໍາ , ຝຸ່ນ, ຢາປ້ອງກັນພືດ, ເມັດພັນພືດ ແລະ ອຸປະກອນຮັບໃຊ້ການປູກຝັງ 3 ວັນ

3.2.3. ເອກະສານຂໍໃບແຈ້ງແຫຼ່ງກໍາເນີດພືດ 4 ວັນ

3.2.4. ເອກະສານຂໍອະນຸຍາດຜະລິດ ແລະ ຈໍາໜ່າຍຝຸ່ນ, ຢາປ້ອງກັນພືດ, ເມັດພັນພືດ ແລະ ອຸປະກອນຮັບໃຊ້ການປູກຝັງ 4 ວັນ

3.2.5. ເອກະສານຂໍໃບອະນຸຍາດ ສ້າງຕັ້ງສວນປູກພືດ ແລະ ສວນໄມ້ດອກໄມ້ປະດັບ 4 ວັນ

3.2.6. ເອກະສານຂໍອະນຸຍາດຫັນປ່ຽນດິນປູກຝັງ 7 ວັນ

3.3. ເອກະສານວຽກງານຂອງຂະແໜງລ້ຽງສັດ ແລະ ການປະມົງ.

3.3.1. ເອກະສານຂໍອະນຸນໍາເຂົ້າອາຫານສັດ, ສ່ວນປະສົມອາຫານສັດ, ອຸປະກອນລ້ຽງສັດ, ຢາປິ່ນປົວ ແລະ ປ້ອງກັນສັດ 3 ວັນ

3.3.2. ເອກສານ ອະນຸຍາດນໍາເຂົ້າ, ສົ່ງອອກສັດ, ແນວພັນສັດ ແລະ ຜະລິດຕະພັນສັດ 3 ວັນ

3.3.3. ເອກະສານຂໍອະນຸເຄື່ອນຍ້າຍສັດ, ຜະລິດຕະພັນສັດໄປຕ່າງແຂວງ 3 ວັນ

3.3.4. ເອກະສານຂໍອະນຸຍາດ ຢັ້ງຢືນສຸຂະພາບສັດ 3 ວັນ

3.3.5. ເອກະສານຂໍກວດກາ, ວິໃຈພະຍາດສັດ ແລະ ຜະລິດຕະພັນສັດ 3 ວັນ

### 3.4. ເອກະສານວຽກງານຂອງຂະແໜງປ່າໄມ້

3.4.1. ເອກະສານຂໍອະນຸຍາດສົ່ງອອກ, ເຄື່ອນຍ້າຍຜ່ານໄມ້ທ່ອນ,ໄມ້ແປຮູບແລະຜະລິດຕະພັນໄມ້ 3 ວັນ

3.4.2. ເອກະສານຂໍອະນຸຍາດ ຂຸດຄົ້ນ ແລະ ເຄື່ອນຍ້າຍ ເຄື່ອງປ່າຂອງດົງ 3 ວັນ

3.4.3. ເອກະສານຂໍອະນຸຍາດຂຶ້ນທະບຽນ, ຕໍ່ທະບຽນຈັກຕັດໄມ້ 3 ວັນ

3.4.4. ເອກະສານຂໍອະນຸຍາດຕັດໄມ້ຈາກບ່ອນຈຳເປັນບ່ອນກໍ່ສ້າງບ່ອນບຸກເບີກເນື້ອທີ່ ແລະໄມ້ປູກ 7 ວັນ

3.4.5. ເອກະສານຂໍຂຶ້ນທະບຽນ ສວນກ້າເບ້ຍໄມ້ ແລະ ສວນປູກໄມ້

### 3.5. ເອກະສານວຽກງານຂອງຂະແໜງຊົນລະປະທານ

3.5.1. ເອກະສານຂໍຢັ້ງຢືນ ຄຸນນະພາບ ການກໍ່ສ້າງຊົນລະປະທານ 5 ວັນ

3.5.2. ເອກະສານຢັ້ງຢືນຜ່ານແບບກໍ່ສ້າງຊົນລະປະທານ 15 ວັນ

3.5.3. ເອກະສານຢັ້ງຢືນ ສຶກສາແຜນສັງລວມ 5 ວັນ

**ມາດຕາ 4:** ມອບໃຫ້ພະແນກກະສິກຳ ແລະ ປ່າໄມ້ນະຄອນຫຼວງວຽງຈັນ ແລະ ພາກສ່ວນກ່ຽວຂ້ອງເປັນຜູ້ຈັດຕັ້ງປະຕິບັດ ຢ່າງເຂັ້ມງວດ.

**ມາດຕາ 5:** ຂໍ້ຕົກລົງສະບັບນີ້ມີຜົນສັກສິດໃຊ້ໄດ້ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ

ຫົວໜ້າພະແນກກະສິກຳ ແລະ ປ່າໄມ້
ນະຄອນຫຼວງວຽງຈັນ

ທ່ານ ດຣ. ຈອດຊະນິດ ອະນາຣາທິທາດາ